Multicultural HIV/AIDS and Hepatitis C Service

NSW GOVERNMENT Health

*NSW Health Factsheet - Lao*

# ບໍລິການຕ່າງໆທີ່ທາງບໍລິການການ ປ້ອງກັນ ແລະ ຄວບຄຸມ ວັນນະໂຣກ/ ຄລີນິກກວດໜ້າເອິກມີໄວ້ໃຫ້.

## *Services provided by Tuberculosis Prevention and Control Service / Chest Clinics*

ຣັດ NSW ມີເຄືອຂ່າຍການບໍລິການການປ້ອງກັນແລະຄວບຄຸມວັນນະໂຣກ (TB)/ຄລີນິກກວດໜ້າເອິກຢູ່ທົ່ວຣັດ. ເຄືອຂ່າຍນີ້ມຸ່ງໝາຍໃສ່ການໃຫ້ບໍຣິການທີ່ກວ້າງຂວາງ ເໝາະສົມກັບວັທນະທັມແລະເຂົ້າຫາໄດ້ງ່າຍຕໍ່ໝົດທຸກຄົນ. ເປົ້າໝາຍຂອງພວກເຮົາແມ່ນໃຫ້ການປິ່ນປົວTB, ຫຼຸດຜ່ອນໂຣກTB ແລະປ້ອງກັນການແຜ່ຜາຍຂອງໂຣກ TB ໃນກຸ່ມຊຸມຊົນ.

ຕໍ່ລົງໄປນີ້ແມ່ນບໍຣິການບາງຢ່າງ ທີ່ທາງເຄືອຂ່າຍ TB ມີໄວ້ໃຫ້ ຟຣີແລະເກັບເປັນຄວາມລັບ

### ການປະເມີນ ແລະ ການກວດໂຣກ TB

- ຈະມີການສຳຣວດເບິ່ງກໍຣະນີທີ່ສົງໃສວ່າມີໂຣກ TB
- ການກວດວັນນະໂຣກໂດຍທາງຜິວໜັງເພື່ອຄົ້ນຫາ ການຕິດເຊື້ອວັນນະໂຣກແຝງ (LTBI)
- ປະສານງານ ແລະ/ຫຼືດຳເນີນການກວດຄັດກອງ ແລະ ການປະເມີນກັບຜູ້ທີ່ຢູ່ໃກ້ຊິດຕິດຕໍ່ກັບຜູ້ທີ່ມີເຊື້ອໂຣກ TB
- ບໍຣິການ ການຖ່າຍເອັກຊ໌ເຣ ແລະການກວດເລືອດ ສຳລັບການກວດສຸຂະພາບທີ່ກ່ຽວພັນກັບໂຣກ TB
- ການປຶກສາຫາລືດ້ານການແພດສຳລັບຄົນປ່ວຍຊຶ່ງຮວມເຖິງການເຂົ້າຮັບການຮັກສາຢູ່ໂຮງໝໍ ແລະ ການດູແລຢູ່ໃນຊຸມຊົນ
- ການປຶກສາຫາລືດ້ານການແພດສຳລັບຜູ້ທີ່ຕິດຕໍ່ໃກ້ຊິດກັບໂຣກ TB, ຜູ້ທີ່ມີວິຊາຊີບດ້ານການດູແລຊຸມຊົນແລະອະນາມັຍ
- ການກວດແບບຄັດກອງ ແລະ ການຄວບຄຸມສະຖານະພາບໂຣກ TB ຂອງບັນດາພະນັກງານໃຫ້ການດູແລສຸຂພາບ

### ການຮັກສາ ແລະ ການ ຄຸ້ມຄອງ

- ການປະສານງານແຜນການປິ່ນປົວຂອງແຕ່ລະ ບຸກຄົນ
- ການປິ່ນປົວໂຣກ TB ທີ່ຖືກຄວບຄຸມຢູ່ທີ່ຄລີນິກ ຢູ່ເຮືອນ ຫຼື ຢູ່ບ່ອນເຮັດວຽກ
- ການປິ່ນປົວການຕິດເຊື້ອໂຣກ TB ແຝງ
- ການຈັດຫານາຍພາສາດ້ານການດູແລສຸຂພາບ ສຳລັບບັນຫາເລື້ອງໂຣກ TB

### ການຮັບຜິດຊອບດ້ານສຸຂພາບ

- ການປະເມີນ, ການກວດແບບຄັດກອງ, ການຕິດຕາມເບິ່ງ, ການຄວບຄຸມ ແລະ ການສິດສອນ ປວງຊົນກ່ຽວກັບການຮັບຜິດຊອບສຸຂພາບເລື້ອງ ວັນນະໂຣກ (TBU). ເລື້ອງTBU ແມ່ນອອກໃຫ້ ໂດຍກະຊວງ Immigration & Citizenship ສຳລັບຜູ້ທີ່ຈະເຂົ້າມາປະເທດອອສເຕຣເລັຍທີ່ຜ່ານ ການຖ່າຍເອັກຊ໌ເຣໜ້າເອິກ ແລະ ຕ້ອງການການຕິດຕາມເບິ່ງ.

### ການກວດແບບຄັດກອງຊາວອົພຍົບ

- ການປະເມີນແລະ ການກວດແບບຄັດກອງຂອງບັນດາເດັກນ້ອຍຊາວອົພຍົບຮ່ວມກັນກັບບໍຣິການ ດ້ານອະນາມັຍອື່ນໆ

### ການສັກຢາ BCG

- ການສັກຢາ BCG ຕາມທີ່ຖືກແນະນຳໃຫ້ສຳລັບບັນດາກຸ່ມທີ່ຖືກເລືອກວ່າເປັນກຸ່ມທີ່ມີຄວາມສ່ຽງຕໍ່ການຕິດຕໍ່ກັບ TB

### ບໍຣິການ ສິດສອນ ແລະ ໃຫ້ຄຳປຶກສາຫາລື

- ໃຫ້ບໍຣິການດ້ານການໃຫ້ຄຳປຶກສາຫາລື ແລະ ສິດສອນສຳລັບບັນດາຄົນປ່ວຍ, ຜູ້ທີ່ມີວິຊາຊີບດ້ານການດູແລຊຸມຊົນແລະອະນາມັຍ ກ່ຽວກັບ ເລື້ອງການປ້ອງກັນພະຍາດ, ການປິ່ນປົວ, ການຄຸ້ມຄອງ ແລະ ການກວດຄັດກອງການຕິດຕໍ່.

## ຂໍ້ມູນທົ່ວໄປ

### ການເຂົ້າເຖິງບັນດາບໍລິການຕ່າງໆ

ສໍາລັບການເຂົ້າຫາບໍລິການສ່ວນຫຼາຍນັ້ນຕ້ອງມີການເຮັດນັດໝາຍ. ເພື່ອຈະຕິດຕໍ່ຄລີນິກທີ່ໃກ້ທ່ານທີ່ສຸດ ຈົ່ງເບິ່ງຣາຍລະອຽດຢູ່ຂ້າງລຸ່ມຂອງໜ້ານີ້

### ການປ່ຽນເວລານັດໝາຍ

ຖ້າທ່ານບໍ່ສາມາດມາຕາມນັດໝາຍໄດ້ ກະຣຸນາແຈ້ງໃຫ້ທາງຄລີນິກຊາບເພື່ອວ່າຈະສາມາດເອົາ ເວລານັດໝາຍນັ້ນໃຫ້ຄົນອື່ນທີ່ຕ້ອງການການນັດໝາຍດ່ວນໄດ້. ວັນແລະເວລາອື່ນທີ່ເໝາະສົມກໍຈະສາມາດຈັດຫາໃຫ້ທ່ານໃໝ່.

### ການຊັກຊ້າຕໍ່ເວລານັດໝາຍ

ພວກເຮົາຈະພະຍາຍາມທຸກວິທີທາງທີ່ຈະພົບທ່ານຕາມເວລານັດໝາຍ ແຕ່ວ່າ ອາດຈະມີບາງຄັ້ງທີ່ຈະບໍ່ສາມາດເຮັດໄດ້ເນື່ອງຈາກເຫດຜົນທີ່ພວກເຮົາບໍ່ສາມາດຄວບຄຸມໄດ້ ເຊັ່ນວ່າ ເມື່ອມີເຫດການສຸກເສີນ, ນາຍໝໍອາດຈະຖືກເອີ້ນໂຕອອກໄປຈາກຄລີນິກ

### ການບໍລິການຢູ່ເຮືອນທ່ານ

ຄົນປ່ວຍບາງຄົນທີ່ພວມໄດ້ຮັບການປິ່ນປົວ TB ຖືກກັບຂໍ້ກໍານົດຂອງການຢ້ຽມຢາມຢູ່ເຮືອນ. ພະຍາບານຈະເປັນຜູ້ບອກເວລາວ່າຍາມໃດເຂົາຈະມາຢ້ຽມເບິ່ງທ່ານ. ເຖິງຢ່າງໃດກໍຕາມ ອາດຈະມີບາງເວລາທີ່ ບໍລິການນີ້ບໍ່ສາມາດເປັນໄປໄດ້ເນື່ອງມາຈາກເຫດທີ່ຄາດບໍ່ເຖິງ

ກະຣຸນາແຈ້ງໃຫ້ພະຍາບານຊາບລ່ວງໜ້າຖ້າທ່ານຈະບໍ່ຢູ່ເຮືອນໃນເວລາທີ່ໄດ້ຈັດໄວ້ໃຫ້

### ຄວາມປອດພັຍຂອງພະນັກງານ

ຄວາມປອດພັຍຂອງພະນັກງານຂອງພວກເຮົາເປັນສິ່ງສໍາຄັນສໍາລັບພວກເຮົາ ດັ່ງນັ້ນພວກເຮົາຈຶ່ງຂໍຄວາມຮ່ວມມືຈາກທ່ານໃນການຊ່ວຍຮັບປະກັນວ່າພວກເຂົາຈະມາຢ້ຽມເບິ່ງທ່ານໄດ້ຢ່າງປອດພັຍ. ພວກເຮົາຂໍໃຫ້ທ່ານຈົ່ງຂັງສັດຂອງທ່ານໄວ້ໃນເວລາທີ່ພະຍາບານຈະມາຢ້ຽມ. ໃນການມາຢ້ຽມຄັ້ງທໍາອິດ ພະນັກງານເຮົາຈະກວດເບິ່ງວ່າຈະມີບັນຫາຫຍັງແດ່ເຊັ່ນວ່າພື້ນຍ່າງທີ່ບໍ່ພຽງຊຶ່ງອາດຈະເຮັດໃຫ້ພວກເຂົາລົ້ມໄດ້. ພວກເຮົາຈະຖອນການຢ້ຽມຢາມຢູ່ເຮືອນຖ້າ ພວກເຮົາເຫັນວ່າພະນັກງານຂອງເຮົາບໍ່ສາມາດມາຢ້ຽມທ່ານໄດ້ດ້ວຍຄວາມປອດພັຍ ແລະ ຈະຈັດຫາວິທີອື່ນສໍາລັບການສືບຕໍ່ການປິ່ນປົວຂອງທ່ານ.

**ບໍ່ຕ້ອງໃຊ້ບັດ Medicare ສໍາລັບບໍລິການ TB ໃດໆ**

**ບໍ່ຈໍາເປັນຕ້ອງມີການແນະນໍາສິ່ງຕໍ່ສເມີໄປ**

**ໃຫ້ເບິ່ງຢູ່ອີກໜ້ານຶ່ງສໍາລັບບັນຊີ ບັນດາບໍລິການຕ່າງໆທີ່ທາງບໍລິການການປ້ອງກັນ ແລະ ຄວບຄຸມວັນນະໂຣກ/ຄລີນິກກວດໜ້າເອິກໃນຣັດ NSW**